**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ
ພະແນກແຜນການ ແລະ ການລົງທຶນ
ຫ້ອງການບໍລິການ ການລົງທຶນປະຕູດຽວ

ເລກທີ 489/ພຜທ.ຫລປ.ນວ
ວັນທີ 3 ກໍລະກົດ 2024

ຂາເຂົ້າ
ສໍານັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ:.........3022.
ວັນທີ:...4...7...24.

# ບົດລາຍງານ

**ຮຽນ:** ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ, **ທີ່ເຄົາລົບ ແລະ ນັບຖື ຢ່າງສູງ.**

**ເລື່ອງ:** ຂໍລາຍງານ ແລະ ຂໍທິດຊີ້ນໍາ ກ່ຽວກັບການສະເໜີຂໍສໍາປະທານ ພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ) ຂອງ ບໍລິສັດ ສຸລິຊາວສິດເຕັ້ມ ຈໍາກັດຜູ້ດຽວ.

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 997/ຫອນວ, ລົງວັນທີ 4 ມີຖຸນາ 2024;
- ອີງຕາມ ບົດບັນທຶກ ກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບການສະເໜີຂໍສໍາປະທານພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ) ຄັ້ງວັນທີ 14 ມີຖຸນາ 2024.

ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ: ໂດຍປະຕິບັດຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 997/ຫອນວ, ລົງວັນທີ 4 ມີຖຸນາ 2024 ວ່າມອບໃຫ້ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ຄົ້ນຄວ້າຕາມການສະເໜີ ແລ້ວລາຍງານຄືນ ກ່ຽວກັບການສະເໜີ ຂໍສໍາປະທານ ພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ) ແລະ ພັດທະນາໃຫ້ເປັນ ຕະຫຼາດແລງຍາມຣາຕີ (ຫຼັງໂມງການຂອງທຸກວັນ) ໃຫ້ເປັນບ່ອນຈໍາໜ່າຍຜະລິດຕະພັນສິນຄ້າລາວ, ອາຫານລາວ ແລະ ຕ່າງປະເທດ, ບ່ອນທ່ຽວຊົມສິນລະປະ ແລະ ເຜີຍແຜ່ວັດທະນະທໍາລາວ, ບ່ອນທ່ອງທ່ຽວຍາມແລງທີ່ມີສີສັນ ແລະ ບັນຍາກາດດີສໍາລັບນັກທ່ອງທ່ຽວຊາວຕ່າງປະເທດ, ມີການຈັດສັນອອກແບບໃຫ້ງົດງາມ ມີເອກະລັກຄວາມເປັນລາວ ພ້ອມທັງປະສົມປະສານກັບແບບສາກົນ, ໃຫ້ເປັນຖະໜົນຄົນເດີນ (ຖະໜົນວຽງຣາຕີ) ຂອງທຸກເພດ-ທຸກໄວ, ບໍລິຫານຈັດການຢ່າງມືອາຊີບ ຮັກສາໄດ້ຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍ, ເປັນບ່ອນຈັດກິດຈະກໍາຕ່າງໆບາງຄັ້ງຄາວ (ເຊັ່ນ: ງານວິຈິດສິນ, ງານຄອນເສີດ ແລະ ງານອື່ນໆ) ເພື່ອດຶງດູດ ແລະ ຕ້ອນຮັບບັນດານັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ທີ່ເດີນທາງມາຢ້ຽມຢາມ ນະຄອນຫຼວງວຽງຈັນ. ແຜນການລົງທຶນພັດທະນາໂຄງການດັ່ງກ່າວ ຈະເປັນການລົງທຶນຂອງບໍລິສັດພວກຂ້າພະເຈົ້າພຽງຝ່າຍດຽວ ຊຶ່ງຍິນດີຈະມອບພັນທະຄ່າສໍາປະທານ ແລະ ຜົນປະໂຫຍດທາງກົງ ແລະ ທາງອ້ອມອື່ນໆ ທີ່ເໝາະສົມໃຫ້ແກ່ ນະຄອນຫຼວງວຽງຈັນ.

ໃນວັນທີ 14 ມີຖຸນາ 2024 ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເປີດກອງປະຊຸມ ຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບການສະເໜີດັ່ງກ່າວ, ຜ່ານການຄົ້ນຄວ້າປຶກສາຫາລື ໄດ້ຕົກລົງເປັນເອກະພາບ ດັ່ງນີ້:

1) ຂໍສະແດງຄວາມຊົມເຊີຍຕໍ່ ບໍລິສັດ ສຸລິຊາວສິດເຕັ້ມ ຈໍາກັດຜູ້ດຽວ ທີ່ມີຄວາມຄິດຢາກພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ), ແຕ່ເນື່ອງຈາກວ່າ ຈຸດທີ່ບໍລິສັດ ສຸລິຊາວສິດເຕັ້ມ ຈໍາກັດຜູ້ດຽວ ໄດ້ສະເໜີ ນັ້ນ, ຜ່ານມາ ສະມາຄົມທຸລະກິດທ່ອງທ່ຽວລາວ

ໄດ້ສະເໜີຂໍພັດທະນາແລ້ວ (ຕາມໜັງສືສະເໜີ ສະບັບເລກທີ 004/ສທທລ, ລົງວັນທີ 19 ກຸມພາ 2024), ຊຶ່ງປັດຈຸບັນ ສະມາຄົມທຸລະກິດທ່ອງທ່ຽວລາວ ກໍາລັງສຶກສາອອກແບບ ແລະ ຂຽນບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການຢູ່. ສະນັ້ນ, ເພື່ອບໍ່ເປັນການສຶກສາສໍາຫຼວດທີ່ທັບຊ້ອນກັນ ຈຶ່ງໃຫ້ບໍລິລັດ ສຸລິຊາວສິດເຕັ້ມ ຈໍາກັດຜູ້ດຽວ ລໍຖ້າຜົນຂອງການສຶກສາສໍາຫຼວດ ຂອງສະມາຄົມທຸລະກິດທ່ອງທ່ຽວລາວ ກ່ອນ ພາຍຫຼັງມີຂໍ້ມູນໃນການອອກແບບຂອງການພັດທະນາແລ້ວ ຈຶ່ງສະເໜີຂໍທິດຊີ້ນໍາ ຈາກການນໍານະຄອນຫຼວງວຽງຈັນ ແລ້ວຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ;

2) ສະເໜີໃຫ້ ຄະນະຮັບຜິດຊອບ ຄົ້ນຄວ້າຈັດກິດຈະກໍາ ຖະໜົນວຽງຣາຕີ ແຄມຖະໜົນລ້ານຊ້າງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ (ຕາມຂໍ້ຕົກລົງ ຂອງທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ ສະບັບເລກທີ 603/ຈນວ, ລົງວັນທີ 25 ກໍລະກົດ 2022) ຊີ້ນໍາໃຫ້ ສະມາຄົມທຸລະກິດທ່ອງທ່ຽວລາວ ສືບຕໍ່ສຶກສາສໍາຫຼວດ ແລະ ອອກແບບກິດຈະກໍາ ໃຫ້ສໍາເລັດ ແລ້ວນໍາສະເໜີ ການນໍານະຄອນຫຼວງວຽງຈັນ ພັດທະນາຕາມລະບຽບການ.

**ທັດສະນະ ຂອງພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ:**

1) ເນື່ອງຈາກວ່າ ຈຸດທີ່ບໍລິສັດ ສຸລິຊາວສິດເຕັ້ມ ຈໍາກັດຜູ້ດຽວ ໄດ້ສະເໜີ ນັ້ນ, ຜ່ານມາ ສະມາຄົມທຸລະກິດທ່ອງທ່ຽວລາວ ໄດ້ສະເໜີຂໍພັດທະນາແລ້ວ (ຕາມໜັງສືສະເໜີ ສະບັບເລກທີ 004/ສທທລ, ລົງວັນທີ 19 ກຸມພາ 2024), ຊຶ່ງປັດຈຸບັນ ສະມາຄົມທຸລະກິດທ່ອງທ່ຽວລາວ ກໍາລັງສຶກສາອອກແບບ ແລະ ຂຽນບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການຢູ່. ສະນັ້ນ, ເພື່ອບໍ່ເປັນການສຶກສາສໍາຫຼວດທີ່ທັບຊ້ອນກັນ ຈຶ່ງໃຫ້ບໍລິລັດ ສຸລິຊາວສິດເຕັ້ມ ຈໍາກັດຜູ້ດຽວ ລໍຖ້າຜົນຂອງການສຶກສາສໍາຫຼວດ ຂອງສະມາຄົມທຸລະກິດທ່ອງທ່ຽວລາວ ກ່ອນ ພາຍຫຼັງມີຂໍ້ມູນໃນການອອກແບບຂອງການພັດທະນາແລ້ວ ຈຶ່ງສະເໜີຂໍທິດຊີ້ນໍາ ຈາກການນໍານະຄອນຫຼວງວຽງຈັນ ແລ້ວຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ;

2) ເຫັນຄວນສະເໜີໃຫ້ ຄະນະຮັບຜິດຊອບ ຄົ້ນຄວ້າກິດຈະກໍາຖະໜົນວຽງຣາຕີ ແຄມຖະໜົນລ້ານຊ້າງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສະບັບເລກທີ 603/ຈນວ, ລົງວັນທີ 25 ກໍລະກົດ 2022, ທົບທວນການຈັດຕັ້ງປະຕິບັດບົດບັນທຶກ ຫຼື ນິຕິກໍາທີ່ມອບໃຫ້ສະມາຄົມທຸລະກິດທ່ອງທ່ຽວລາວ ຄົ້ນຄວ້າ ແລະ ສ້າງແຜນພັດທະນາໂຄງການດັ່ງກ່າວ ເພາະໃຊ້ເວລາດົນແລ້ວ, ພື້ນທີ່ກໍ່ບໍ່ຫຼາຍ, ຄວນເປີດໂອກາດໃຫ້ຜູ້ອື່ນທີ່ມີຄວາມສາມາດອອກແບບ ແລະ ຈັດກິດຈະກໍາດັ່ງກ່າວ, ຖ້າຈະໃຫ້ໂອກາດ ສະມາຄົມທຸລະກິດທ່ອງທ່ຽວລາວ ກໍ່ບໍ່ຄວນກາຍ 1-3 ເດືອນ.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ຂໍທິດຊີ້ນໍາຕາມເຫັນສົມຄວນດ້ວຍ.

**ຫົວໜ້າພະແນກ,**
**ຫົວໜ້າຫ້ອງການບໍລິການ ການລົງທຶນປະຕູດຽວ**
**ຂັ້ນ ນະຄອນຫຼວງວຽງຈັນ**

ພະແນກ ແຜນການ ແລະ ການລົງທຶນ

**ປອ.ນ.ບົວວອນ ສຸກລາແສງ**